ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ລະບຽບລວມໃນການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ

ຄືດັ່ງທີ່ບັນດາທ່ານຜູ້ອ່ານຮັບຮູ້ນຳກັນຢູ່ບົດທີ່ຜ່ານມາແລ້ວວ່າການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນແມ່ນພາໃຫ້ເກີດມີຄວາມໝັ້ນໃຈ ແລະ ຮັບປະການເຖິງຄວາມປອດໄພ ແລະ ຄວາມໂປ່ງໃສລະຫວ່າງຜູ້ສະໜອງ ແລະ ຜູ້ຊົມໃຊ້ບໍລິການ. ແຕ່ຄວາມເປັນຈິງແລ້ວລະບຽບການແມ່ນປົກປ້ອງຜົນປະໂຫຍດອັນຖືກຕ້ອງທັງສອງຝ່າຍລະຫວ່າງຜູ້ໃຫ້ບໍລິການ ແລະ ຜູ້ຊົມໃຊ້ບໍລິການທາງດ້ານການເງິນດຳເນີນໄປດ້ວຍດີ. ດ້ວຍເຫດນີ້, ສິ່ງທີ່ຕາມມາກໍແມ່ນຂອບເຂດໃດທີ່ຖືວ່າການນຳໃຊ້ບໍລິການທາງດ້ານການເງິນທີ່ຈະໄດ້ຮັບການປົກປ້ອງ. ຖ້າເວົ້າອີກຢ່າງໜຶ່ງກໍແມ່ນຖ້າລູກຄ້າທີ່ນຳໃຊ້ການບໍລິການທາງດ້ານການເງິນໂດຍແມ່ນທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກເປັນຜູ້ສະໜອງການບໍລິການເຫຼົ່ານີ້ແມ່ນຈະໄດ້ຮັບການປົກປ້ອງແບບໃດ ແລະ ມີຜະລິດຕະພັນໃດແດ່ຊຶ່ງບັນດາຜະລິດຕະພັນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນກໍມີ: **“ການຮັບເງິນຝາກລວມທັງການອອກໃບຢັ້ງຢືນເງິນຝາກ; ການສະໜອງສິນເຊື່ອ; ການບໍລິການບັດ; ການເຊົ່າສິນເຊື່ອ; ການຊວດຈຳ; ການບໍລິການຊຳລະ; ການຊື້-ຂາຍເງິນຕາ; ການບໍລິການອື່ນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ**’’

ເພື່ອເຮັດການໃຫ້ບໍລິການບັນດາຜະລິດຕະພັນທີ່ກ່າວມານັ້ນໃຫ້ດຳເນີນໄປຢ່າງໂປ່ງໃສ ແລະ ຮັບປະກັນເຖິງຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ຫຼື ລູກຄ້າຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ, ທະນາຄານແຫ່ງ ສປປ ລາວ ໃນນາມເປັນອົງກອນທີ່ຖືກກຳນົດໃຫ້ເປັນຜູ້ຄຸ້ມຄອງວຽກງານດ້ານນີ້ ໂດຍສະເພາະແມ່ນວຽກງານປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນກໍມີເຄື່ອງມືທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕາມທີ່ໄດ້ລະບຸໄວ້ໃນເນື້ອໃນໝວດທີ 2 ຂອງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນກໍໄດ້ກຳນົດແຈ້ງ ແລະ ລະອຽດກ່ຽວກັບດ້ານຕ່າງໆເຊັ່ນ: ການບໍລິຫານຄວາມສ່ຽງຂອງຜູ້ໃຫ້ບໍລິການ; ການກຳນົດຄວາມເໝາະສົມ ແລະ ລາຄາຂອງຜະລິດຕະພັນ; ການເປີດເຜີຍຂໍ້ມູນກ່ຽວກັບການບໍລິການທາງດ້ານການເງິນ; ການໃຫ້ບໍລິການແກ່ຜູ້ຊົມໃຊ້; ການຮັກສາຂໍ້ມູນຂອງຜູ້ຊົມໃຊ້; ການຮັບ ແລະ ແກ້ໄຂ ຄຳສະເໜີຂອງຜູ້ຊົມໃຊ້; ຄວາມສາມາດດ້ານວິຊາຊີບຊຶ່ງລະບຽບການລວມນີ້ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ຫຼື ຜູ້ສະໜອງການບໍລິການທາງດ້ານການເງິນແກ່ລູກຄ້າຂອງຕົນຈະໄດ້ປະຕິບັດຕາມເພື່ອໃຫ້ການບໍລິການນັ້ນເປັນຕາໜ້າເຊື່ອຖື ແລະ ເປັນທີ່ໄວ້ວາງໃຈຂອງສັງຄົມ.

ນອກຈາກບັນດາບົດບັນຍັດທີ່ກຳນົດໄວ້ໃນກົດໝາຍ ແລະ ດຳລັດທີ່ກ່ຽວຂ້ອງແລ້ວກໍຍັງມີລະບຽບການອື່ນທີ່ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການສ້າງ ຫຼື ເປັນອົງກອນທີ່ອອກນິຕິກຳລຸ່ມກົດໝາຍ ແລະ ດຳລັດເພື່ອເປັນເຄື່ອງມື ແລະ ກົນໄກໃຫ້ຜູ້ສະໜອງການບໍລິການທາງດ້ານການເງິນຈັດຕັ້ງປະຕິບັດ. ຊຶ່ງໃນກົດໝາຍ, ດຳລັດ ແລະ ລະບຽບການກໍໄດ້ກຳນົດມາດຕະການລະອຽດຕໍ່ບຸກຄົນ ຫຼື ນິຕິບຸກຄົນທີ່ລະເມີດ ຫຼື ບໍ່ຈັດຕັ້ງປະຕິບັດຕາມດ້ວຍຮູບການທີ່ເໝາະສົມ. ຫວັງວ່າບົດຄວາມນີ້ອາດເປັນຜົນດີໃຫ້ແກ່ຜູ້ສົນໃຈອ່ານເພື່ອສຶກສາຄົ້ນຄວ້າ ແລະ ເປັນຂໍ້ມູນບາງສ່ວນໃນການປະກອບເອກະສານ ແລະ ເປັນບ່ອນສົມທຽບຄວາມຄິດເຫັນຂອງຕົນໄດ້.

**# ບົດຄວາມໂດຍ: ກົມນິຕິກຳ, ທະນາຄານແຫ່ງ ສປປ ລາວ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ